**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ບໍລິສັດ ດັກລັກ ຣັບເບີ ຈຳກັດ**

**DAKLAORUCO** ເລກທີ: 04/ລບ-ບສ

ປາກເຊ, ວັນທີ 17 ເດືອນ 4 ປີ 2025

# ກົດລະບຽບ

## ວ່າດ້ວຍ ມາດຕະການຄວາມສ່ຽງໃນວຽກງານຄຸ້ມຄອງປ່າໄມ້

- ອີງຕາມກົດໝາຍວ່າດ້ວຍແຮງງານ ສະບັບປັບປຸງ ປີ 2013 ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ເອກະສານນິຕິກຳທີ່ກ່ຽວຂ້ອງ.

- ອີງຕາມມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ FSC-STD-LAO-01-2020.

- ພິຈາລະນາການສະເໜີຂອງຄະນະກຳມະການ FSC ຂອງບໍລິສັດ.

**ມາດຕາ 1.** ປະກາດໃຊ້ລະບຽບວ່າດ້ວຍ ມາດຕະການຄວາມສ່ຽງຕໍ່ຜູ້ອອກແຮງງານ ແລະ ຊຸມຊົນຈາກວຽກງານການຄຸ້ມຄອງປ່າໄມ້ ແລະ ໄພພິບັດທຳມະຊາດໃນເອກະສານຊ້ອນທ້າຍຂອງລະບຽບການສະບັບນີ້.

**ມາດຕາ 2.** ຫົວໜ້າບັນດາຫ້ອງການຂອງບໍລິສັດ, ຜູ້ອຳນວຍການນິຄົມມີໜ້າທີ່ຮັບຜິດຊອບຊີ້ນຳ ແລະ ຈັດຕັ້ງປະຕິບັດລະບຽບມາດຕະການຄວາມສ່ຽງໃນວຽກງານຄຸ້ມຄອງປ່າໄມ້.

**ມາດຕາ 3.** ຫ້ອງເຕັກນິກຜະລິດ, ຫ້ອງການບໍລິສັດ ຄະນະປະຈຳການ FSC ຮັບຜິດຊອບກວດກາ ຕິດຕາມລະບຽບມາດຕະການຄວາມສ່ຽງໃນວຽກງານຄຸ້ມຄອງປ່າໄມ້.

**ມາດຕາ 4.** ຜູ້ອຳນວຍການນິຄົມມີໜ້າທີ່ປະສານສົມທົບກັບບັນດາບ້ານໃນຂອບເຂດການຄຸ້ມຄອງຂອງຕົນເພື່ອໂຄສະນາ ປຸກລະດົມປະຊາຊົນໃນພື້ນທີ່ ປະຕິບັດກິດຈະກຳຫຼຸດຜ່ອນຄວາມສ່ຽງໃນຂອບເຂດການຄຸ້ມຄອງຂອງບໍລິສັດ.

ຂ້າງເທິງນີ້ແມ່ນກົດລະບຽບວ່າດ້ວຍມາດຕະການ ຄວາມສ່ຽງໃນວຽກງານຄຸ້ມຄອງປ່າໄມ້” ຂອງຜູ້ອຳນວຍການບໍລິສັດ, ບັນດາ ຫ້ອງການວິຊາສະເພາະ, ບັນດານິຄົມ ແລະ ພະນັກງານກຳມະກອນ ໃນບໍລິສັດຈົ່ງປະຕິບັດຢ່າງເຂັ້ມງວດ.

**ຜູ້ອຳນວຍການບໍລິສັດ**

ກະຊວງ ກະສິກຳ ແລະ ປ່າໄມ້ ບໍລິສັດ ດັກລັກ ຣັບເບີ ຈຳກັດ DAKLAK RUBBER CO.,LTD ແຂວງ ຈຳປາສັກ

ດັ້ງດິ່ງຝຸ່ງ

**ບ່ອນນຳສົ່ງ:**

- ຄະນະອຳນວຍການ ບສ;
- ບັນດາໜ່ວຍງານ;
- ບັນດາບ້ານໃນເຂດໂຄງການ;
- ສຳເນົາ, ຄະນະກຳມະການ FSC.

ມາດຕະການຄວາມສ່ຽງຕໍ່ຜູ້ອອກແຮງງານ ແລະ ຊຸມຊົນຈາກວຽກງານການຄຸ້ມຄອງປ່າໄມ້ແລະໄພທໍາມະຊາດ

| **ວຽກງານຄຸ້ມຄອງປ່າໄມ້ ແລະ ເຄື່ອງມືການຜະລິດ** | **ເປົ້າໝາຍທີ່ໄດ້ຮັບຜົນກະທົບແລະວິທີແກ້ໄຂເພື່ອຈໍາກັດຄວາມສ່ຽງ** | |
|---|---|---|
| | **ຕໍ່ຜູ້ອອກແຮງງານ** | **ຕໍ່ຊຸມຊົນ** |
| 1. **ສວນກ້າ** | | |
| ສີດຢາຂ້າແມງໄມ້ເພື່ອປ້ອງກັນສັດຕູພືດແລະພະຍາດ | ຜົນກະທົບຕໍ່ສຸຂະພາບ.<br>- ບໍ່ນໍາໃຊ້ສານເຄມີທີ່ຫ້າມນໍາໃຊ້.<br>- ບໍລິສັດມີລະບຽບການຄຸ້ມຄອງ ແລະ ນໍາໃຊ້ສານເຄມີ ແລະ ຢາປາບສັດຕູພືດ.<br>- ຜູ້ອອກແຮງງານໄດ້ຮັບການຝຶກອົບຮົມໃນການນໍາໃຊ້ອຸປະກອນແລະສານເຄມີ.<br>- ຜູ້ອອກແຮງງານໄດ້ຮັບແລະ ນໍາໃຊ້ຊຸດປ້ອງແຮງງານທີ່ເໝາະສົມ. | ຜົນກະທົບຕໍ່ສຸຂະພາບ.<br>- ສະຖານທີ່ເຮັດສວນກ້າຢູ່ຫ່າງຈາກພື້ນທີ່ທີ່ຢູ່ອາໄສ |
| **2. ປູກແລະບົວລະບັດປ່າໄມ້** | | |
| ຖາງອະນາໄມ, ຈູດສິ່ງເສດເຫຼືອ | ອຸບັດຕິເຫດແຮງງານ.<br>- ຜູ້ອອກແຮງງານຕ້ອງໄດ້ຮັບການຝຶກອົບຮົມເຕັກນິກການຖາງອະນາໄມ, ຈູດສິ່ງເສດເຫຼືອລວມທັງຄໍາແນະນໍາກ່ຽວກັບວິທີການໃຊ້ເຄື່ອງຕັດຫຍ້າ.<br>- ຈູດສິ່ງເສດເຫຼືອດ້ວຍວິທີທີ່ມີການຄວບຄຸມ<br>- ຜູ້ອອກແຮງງານໄດ້ຮັບການແນະນໍາ, ຝຶກອົບຮົມກ່ຽວກັບຄວາມປອດໄພແຮງງານໃນ ການໃຊ້ເຄື່ອງຕັດຫຍ້າ.<br>- ຜູ້ອອກແຮງງານໄດ້ຮັບແລະນໍາໃຊ້ຊຸດປ້ອງແຮງງານທີ່ເໝາະສົມ. | ສະພາບແວດລ້ອມການດໍາລົງຊີວິດຂອງຊຸມຊົນໄດ້ຮັບຜົນກະທົບທາງລົບ<br>- ແຈ້ງໃຫ້ຊຸມຊົນຮັບຊາບໃນກໍາລະນີທີ່ມີການຈູດສິ່ງເສດເຫຼືອ |
| ສີດຢາຂ້າຫຍ້າເພື່ອປ້ອງກັນສັດຕູພືດແລະພະຍາດ | ຜົນກະທົບຕໍ່ສຸຂະພາບ.<br>- ບໍ່ນໍາໃຊ້ສານເຄມີທີ່ຫ້າມນໍາໃຊ້.<br>- ບໍລິສັດມີລະບຽບການແລະປະຕິບັດຖືກຕາມລະບຽບຄຸ້ມຄອງ ແລະ ນໍາໃຊ້ສານເຄມີ, ຢາປາບສັດຕູພືດແລະພະຍາດ.<br>- ຜູ້ອອກແຮງງານໄດ້ຮັບການຝຶກອົບຮົມໃນການນໍາໃຊ້ອຸປະກອນແລະສານເຄມີ.<br>- ຜູ້ອອກແຮງງານໄດ້ຮັບແລະ ນໍາໃຊ້ຊຸດປ້ອງແຮງງານທີ່ເໝາະສົມ. | ຜົນກະທົບຕໍ່ສຸຂະພາບ.<br>- ແຈ້ງໃຫ້ຊຸມຊົນຮັບຊາບກ່ອນທີ່ຈະສີດສານເຄມີ<br>- ບໍ່ນໍາໃຊ້ຢາຂ້າຫຍ້າແລະສານເຄມີທີ່ຫ້າມນໍາໃຊ້. |
| ຂຸດຂຸມ, ຖົມຂຸມ | ອຸບັດຕິເຫດແຮງງານ.<br>- ຜູ້ອອກແຮງງານຕ້ອງໄດ້ຮັບການຝຶກອົບຮົມເຕັກນິກການ; ສໍາລັບຜູ້ອອກແຮງງານທີ່ນໍາໃຊ້ເຄື່ອງຈັກຂຸດຂຸມ, ຖົມຂຸມຕ້ອງມີໃບຢັ້ງຢືນວິຊາຊີບ.<br>- ຜູ້ອອກແຮງງານໄດ້ຮັບການ ຝຶກອົບຮົມ,ແນະນໍາ, ກ່ຽວກັບຄວາມປອດໄພແຮງງານ<br>- ຜູ້ອອກແຮງງານໄດ້ຮັບແລະ ນໍາໃຊ້ຊຸດປ້ອງແຮງງານທີ່ເໝາະສົມ. | |

| ວຽກງານຄຸ້ມຄອງປ່າໄມ້ ແລະ ເຄື່ອງມືການຜະລິດ | ເປົ້າໝາຍທີ່ໄດ້ຮັບຜົນກະທົບແລະວິທີແກ້ໄຂເພື່ອຈຳກັດຄວາມສ່ຽງ | |
|---|---|---|
| | ຕໍ່ຜູ້ອອກແຮງງານ | ຕໍ່ຊຸມຊົນ |
| **3. ຂຸດຄົ້ນຜະລິດຕະພັນປ່າໄມ້** | | |
| - ຂຸດຄົ້ນຢາງພາລາ, ຂົນສົ່ງຢາງສົ່ງອອກຈາກສະໜາມ | - ຜູ້ອອກແຮງງານຕ້ອງໄດ້ຮັບການຝຶກອົບຮົມ ແລະ ແນະນຳເຕັກນິກການຂຸດຄົ້ນຢາງພາລາ (ລວມທັງການໃຊ້ສານກະຕຸ້ນນ້ຳຢາງ ແລະນ້ຳຢາກັນກ້າມ).<br>- ຜູ້ອອກແຮງງານທີ່ຂົນສົ່ງຢາງດ້ວຍລົດຈັກຕ້ອງປະຕິບັດຕາມກົດລະບຽບການສັນຈອນ ແລະ ມີໃບຂັບຂີ່ລົດຈັກ.<br>- ຜູ້ອອກແຮງງານໄດ້ຮັບການ ຝຶກອົບຮົມ, ແນະນຳ, ກ່ຽວກັບຄວາມປອດໄພແຮງງານ<br>- ຜູ້ອອກແຮງງານໄດ້ຮັບແລະ ນຳໃຊ້ຊຸດປ້ອງແຮງງານທີ່ເໝາະສົມ. | |
| - ຕັດຕົ້ນໄມ້, ການປ່ອຍໄມ້ທ່ອນລົງແຕ່ຄອ້ຍ, ຂົນສົ່ງໄມ້ອອກຈາກສະໜາມ | ອຸບັດຕິເຫດອາດຈະເກີດຂຶ້ນ.<br>- ພະນັກງານຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບການຂຸດຄົ້ນໄມ້ທີ່ມີຜົນກະທົບຕ່ຳ ແລະ ແນະນຳການນຳໃຊ້ເຄື່ອງມືການເຮັດວຽກໃນການຕັດໄມ້, ການປ່ອຍໄມ້ທ່ອນລົງແຕ່ຄອ້ຍ ແລະ ການຂົນສົ່ງໄມ້ອອກຈາກສະໜາມ.<br>- ຫ້າມຂຸດຄົ້ນໃນເວລາມີຝົນຕົກ.<br>- ຜູ້ອອກແຮງງານໄດ້ຮັບແລະ ນຳໃຊ້ຊຸດປ້ອງແຮງງານທີ່ເໝາະສົມ. | ອຸບັດຕິເຫດອາດຈະເກີດຂຶ້ນ.<br>- ຕ້ອງແຈ້ງໃຫ້ຊຸມຊົນຮັບຊາບ ກ່ອນການຂຸດຄົ້ນ,ຕ້ອງມີປ້າຍເຕືອນໃນເຂດຂຸດຄົ້ນ, ໃນກໍລະນີຈຳເປັນຕ້ອງມີປ້ອງກັນປະຈຳ ແລະ ຕັກເຕືອນ.<br>- ໃນກໍລະນີນຳໃຊ້ອຸປະກອນເຄື່ອງຈັກເພື່ອຂົນສົ່ງອອກຈາກສະໜາມ,ຕ້ອງມີມາດຕະການຫຼຸດຜ່ອນສິ່ງລົບກວນ, ນ້ຳມັນເຊື້ອໄຟ, ອາຍພິດທີ່ເຮັດໃຫ້ເກີດມົນລະພິດຕໍ່ສະພາບແວດລ້ອມການດຳລົງຊີວິດຂອງຊຸມຊົນ. |
| **4. ຂົນສົ່ງ** | | |
| - ທາງບົກ | - ອຸບັດຕິເຫດແຮງງານໂດຍສະເພາະຢູ່ທາງໂຄ້ງ, ເສັ້ນທາງຖືກນ້ຳຖ້ວມໃນຊ່ວງລະດູຝົນ ແລະ ນ້ຳຖ້ວມ.<br>- ພາຫະນະ ແລະ ເຄື່ອງຈັກຕ້ອງມີຄວາມເໝາະສົມ, ປອດໄພ ແລະ ໄດ້ມາດຕະຖານ;ຫ້າມບໍ່ໃຫ້ຄົນນັ່ງຢູ່ເທິງຫຼັງລົດ ແລະ ຫ້າມຂົນໄມ້ ເກີນຂະໜາດ ຫຼື ເກີນນ້ຳໜັກສຳລັບການຂົນສົ່ງໄມ້. ຂົນສົ່ງຢາງພາລາຕ້ອງນຳໃຊ້ລົດຂົນສົ່ງທີ່ບໍລິສັດນຳໃຊ້.<br>- ຫ້າມບໍ່ໃຫ້ຂົນສົ່ງຂ້າມຫ້ວຍໃນເວລາຝົນຕົກນ້ຳຖ້ວມ.<br>- ຜູ້ອອກຮງງານຕ້ອງໄດ້ຜ່ານການຝຶກອົບຮົມ, ຕ້ອງມີໃບຂັບຂີ່<br>- ຜູ້ອອກແຮງງານໄດ້ຮັບແລະນຳໃຊ້ຊຸດປ້ອງແຮງງານທີ່ເໝາະສົມ. | ອຸປະຕິເຫດໃນການສັນຈອນ.<br>- ຕ້ອງແຈ້ງຊຸມຊົນຮັບຊາບກ່ອນບໍລິສັດຈະຂົນສົ່ງຜະລິດຕະພັນປ່າໄມ້.<br>- ຫຼຸດຜ່ອນການຂົນສົ່ງໃນເຂດທີ່ມີປະຊາກອນໜາແໜ້ນ ແລະ ໃນຊ່ວງເວລາທີ່ມີການສັນຈອນຫຼາຍ |

| ວຽກງານຄຸ້ມຄອງປ່າໄມ້ ແລະ ເຄື່ອງມືການຜະລິດ | ເປົ້າໝາຍທີ່ໄດ້ຮັບຜົນກະທົບແລະວິທີແກ້ໄຂເພື່ອຈຳກັດຄວາມສ່ຽງ | |
|---|---|---|
| | ຕໍ່ຜູ້ອອກແຮງງານ | ຕໍ່ຊຸມຊົນ |
| **5. ປົກປັກຮັກສາປ່າໄມ້** | | |
| ສະກັດກັ້ນໄຟໄໝ້ປ່າ | ອຸບັດເຫດແຮງງານ<br>ສ້າງ ແລະ ຈັດຕັ້ງປະຕິບັດແຜນປ້ອງກັນ ແລະ ຕ້ານໄຟໄໝ້ປ່າ. | - ບໍ່ໃຫ້ໄຟໄໝ້ປ່າແຜ່ລາມໄປສູ່ປ່າຊຸມຊົນ ແລະເຂດທີ່ຢູ່ອາໄສ. |
| ປ້ອງກັນພະຍາດສັດຕູພືດ | ສິ່ງຜົນກະທົບຕໍ່ສຸຂະພາບ ແລະ ຄວາມປອດໄພຂອງຜູ້ອອກແຮງງານ<br>- ບໍ່ນຳໃຊ້ສານເຄມີທີ່ຫ້າມນຳໃຊ້.<br>- ເມື່ອນຳໃຊ້ຢາຕ້ອງປະຕິບັດຕາມຄຳຂ້ອນດັ່ງນີ້: ໃຊ້ຢາຖືກຕ້ອງຕາມພະຍາດ, ຖືກປະລິມານ, ຖືກເວລາ ແລະ ຖືກວິທີ.<br>- ຜູ້ອອກແຮງງານໄດ້ຮັບການຝຶກອົບຮົມທາງດ້ານເຕັກນິກ ແລະ ຄວາມປອດໄພ ໃນການນຳໃຊ້ຢາເຄມີ.<br>- ຜູ້ອອກແຮງງານໄດ້ຮັບແລະ ນຳໃຊ້ຊຸດປ້ອງແຮງງານທີ່ເໝາະສົມ. | ຜົນກະທົບຕໍ່ສຸຂະພາບຊຸມຊົນຕ້ອງແຈ້ງໃຫ້ຊຸມຊົນຮັບຊາບກ່ອນສີດຢາປາບສັດຕູພືດ ແລະ ພະຍາດຕ່າງໆ. |
| - ແກ້ໄຂຂໍ້ຂັດແຍ່ງ ທີ່ດິນປ່າ ຫຼືຜະລິດຕະພັນປ່າໄມ້. | ອຸບັດຕິເຫດອາດຈະເກີດຂຶ້ນໄດ້ເມື່ອມີການບຸກລຸກ ແລະ ທຳລາຍປ່າ.<br>- ສ້າງ ແລະ ປະຕິບັດລະບຽບການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ.<br>- ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ ເພື່ອແກ້ໄຂຂໍ້ຂັດແຍ່ງ, ເຄົາລົບການປະນີປະນອມໄກ່ເກ່ຍ ແລະ ປະຕິບັດຕາມກົດໝາຍ. | ອຸບັດຕິເຫດອາດຈະເກີດຂຶ້ນ.<br>- ແກ້ໄຂຂໍ້ຂັດແຍ່ງຕາມລະບຽບຂອງກົດໝາຍ.<br>- ຮັບປະກັນ ແລະ ຮັກສາຄວາມເປັນລະບຽບຮຽບຮ້ອຍ, ຄວາມສະຫງົບຂອງສັງຄົມ.<br>- ປະສານສົມທົບກັບບ້ານ ແລະ ອຳນາດການປົກຄອງ ເພື່ອແກ້ໄຂຂໍ້ຂັດແຍ່ງ. |
| **6.** ສ້າງເສັ້ນທາງສິ່ງອອກ**ຈາກສະໜາມ**ແລະການຂົນສົ່ງ | | |
| - ການກໍ່ສ້າງກົນຈັກ | ອຸບັດເຫດແຮງງານ<br>- ບໍ່ສ້າງເສັ້ນທາງສິ່ງອອກ;<br>- ອຸປະກອນ ແລະ ພາຫະນະເຄື່ອງຈັກຮັບປະກັນດ້ານຄຸນນະພາບ.<br>- ຜູ້ບັນຊາເຄື່ອງຈັກ ແລະ ອຸປະກອນ ຕ້ອງມີໃບຢັ້ງຢືນວິຊາຊີບ.<br>- ຜູ້ອອກແຮງງານໄດ້ຮັບການຝຶກອົບຮົມທາງດ້ານເຕັກນິກ ແລະ ຄວາມປອດໄພ ແຮງງານ.<br>- ຜູ້ອອກແຮງງານໄດ້ຮັບແລະ ນຳໃຊ້ຊຸດປ້ອງແຮງງານທີ່ເໝາະສົມ. | ອຸບັດຕິເຫດ, ສິ່ງຜົນກະທົບຕໍ່ກັບສະພາບແວດລ້ອມຊີວິດການເປັນຢູ່ຂອງຊຸມຊົນ.<br>- ຕ້ອງແຈ້ງໃຫ້ຊຸມຊົນຮັບຊາບກ່ອນການກໍ່ສ້າງ.<br>- ຫຼຸດຜ່ອນຜົນກະທົບທາງລົບຂອງອຸປະກອນ ແລະ ເຄື່ອງຈັກຕໍ່ກັບສະພາບແວດລ້ອມດຳລົງຊີວິດຂອງຊຸມຊົນ |
| 7. ໄພພິບັດທຳມະຊາດ, ການໂຈມຕີສັດປ່າ | | |
| ລົມພະຍຸ | - ອຸບັດເຫດມັກຈະເກີດໃນສະພາບອາກາດທີ່ບໍ່ດີ, ມີຝົນຕົກໜັກ ແລະ ລົມແຮງ (ຕາມແຈ້ງ | ອຸບັດເຫດມັກຈະເກີດຂຶ້ນໃນສະພາບອາກາດທີ່ບໍ່ດີ, ມີຝົນຕົກໜັກ ແລະ ລົມແຮງ |

| ວຽກງານຄຸ້ມຄອງປ່າໄມ້ ແລະ ເຄື່ອງມືການຜະລິດ | ເປົ້າໝາຍທີ່ໄດ້ຮັບຜົນກະທົບແລະວິທີແກ້ໄຂເພື່ອຈຳກັດຄວາມສ່ຽງ | |
|---|---|---|
| | ຕໍ່ຜູ້ອອກແຮງງານ | ຕໍ່ຊຸມຊົນ |
| | ການເລກທີ 25/2025/TT.BLĐTBXH ລົງວັນທີ 30/11/2022 ຂອງກະຊວງແຮງງານ, ເສຍອົງຄະ ແລະ ສັງຄົມ (ສສ ຫວຽດນາມ): ກຳມະກອນຂຸດຄົ້ນຢາງພຽງແຕ່ໄດ້ຮັບໝວກທີ່ເປັນແຜ່ອ່ອນ).<br>- ເມື່ອມີລົມແຮງ, ງ່າໄມ້ແຫ້ງອາດຈະຕົກລົງໃສ່ຫົວກຳມະກອນທີ່ກຳລັງເຮັດວຽກ;<br>- ບໍລິສັດໄດ້ອອກນິຕິກຳຊີ້ນຳບັນດານິຄົມປະຕິບັດຕາມລະບຽບການບໍ່ໃຫ້ກຳມະກອນກີດຢາງໃນສະພາບອາກາດບໍ່ອຳນວຍຄວາມສະດວກ, ລົມແຮງ, ຝົນຕົກໜັກ. | - ປະສານສົມທົບກັບອຳນາດການປົກຄອງເພື່ອແຈ້ງໃຫ້ປະຊາຊົນຫຼີກລ້ຽງການເຂົ້າໄປປ່າໃນເວລາມີລົມພະຍຸ. |
| ງູພິດຕອດ | ອຸບັດຕິເຫດ: ງູພິດຕອດຜູ້ອອກແຮງງານ<br>- ອອກລະບຽບການວ່າດ້ວຍຝຶກອົບຮົມຄວາມປອດໄພແຮງງານ, ເພີ່ມທະວີມາດຕະການຄວາມປອດໄພໃນກໍລະນີຖືກຟ້າຜ່າ ແລະ ພິດງູຕອດ;<br>- ເຜີຍແຜ່ກົດລະບຽບສະບັບເລກທີ 11/ລບ-ບສ ລົງວັນທີ 1 ສິງຫາ 2024 ວ່າດ້ວຍ"ການຝຶກອົບຮົມອະນາໄມ, ຄວາມປອດໄພແຮງງານໃນເວລາຂຸດຄົ້ນຢາງພາລາ" ແລະ ກົດລະບຽບເລກທີ 07/ລບ-ບສ ລົງວັນທີ 22 ມິຖຸນາ 2024 ວ່າດ້ວຍ "ກົດລະບຽບ ອະນາໄມ,ຄວາມປອດໄພແຮງງານແກ່ຜູ້ອອກແຮງງານ".<br>- ກຳນົດ ແລະ ຕິດປ້າຍໃນເຂດທີ່ມີງູພິດມັກເຄື່ອນໄຫວ ເປັນພາສາລາວ-ຫວຽດນາມ | - ມັກຈະຖືກງູພິດຕອດເມື່ອເຂົ້າປ່າໂດຍສະເພາະບ່ອນທີ່ມີປ້າຍເຕືອນ.<br>- ປະສານສົມທົບກັບອຳນາດການປົກຄອງອອກແຈ້ງການໃຫ້ຊຸມຊົນ ຫຼີກລ້ຽງເຂດທີ່ມີງູພິດມັກປະກົດຢູ່ໃນເຂດຄຸ້ມຄອງ. |